ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 4039 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 27/09/22

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງໜ່ວຍງານບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ

- ອີງຕາມ ກົດໝາຍ ວ່າດ້ວຍແຮງງານ ສະບັບປັບປຸງ, ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 602/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ດຳລັດ ວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ, ສະບັບເລກທີ 22/ລບ, ລົງວັນທີ 05 ກຸມພາ 2019;
- ອີງຕາມ ໜັງສືສະເໜີ ຂອງກົມຄຸ້ມຄອງແຮງງານ, ສະບັບເລກທີ 122/ກຮງ, ລົງວັນທີ 25 ກຸມພາ 2022.

## ລັດຖະມົນຕີ ຕົກລົງ:

## ໝວດທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການເຄື່ອນໄຫວທຸລະກິດບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ເພື່ອເຮັດໃຫ້ມີຄວາມເປັນເອກະພາບກັນ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ.

### ມາດຕາ 2 ໜ່ວຍງານບໍລິການ

ໜ່ວຍງານບໍລິການດ້ານຄວາມປອດໄພແຮງງານ ແມ່ນການຈັດຕັ້ງທຸລະກິດໜຶ່ງ ມີຖານະເປັນນິຕິບຸກຄົນທີ່ໄດ້ຮັບອະນຸຍາດຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ດຳເນີນທຸລະກິດດ້ານການບໍລິການໃຫ້ຄຳປຶກສາ, ຝຶກອົບຮົມ, ປະເມີນຄວາມສ່ຽງ, ຄວບຄຸມຄວາມສ່ຽງ, ກຳຈັດຄວາມສ່ຽງ ທີ່ເປັນອັນຕະລາຍ ແລະ ດຳເນີນການວັດແທກດ້ານມາດຕະຖານຂອງການເຮັດວຽກ.

ໜ່ວຍງານບໍລິການດ້ານສຸຂະພາບແຮງງານ ແມ່ນການຈັດຕັ້ງທຸລະກິດໜຶ່ງ ມີຖານະເປັນນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ການເຫັນດີຈາກກະຊວງສາທາລະນະສຸກ ໃຫ້ດຳເນີນທຸລະກິດການບໍລິການກວດສຸຂະພາບໃຫ້ຜູ້ອອກແຮງງານລາວ ທີ່ເຮັດວຽກຢູ່ພາຍໃນ, ຜູ້ອອກແຮງງານລາວທີ່ຈະໄປເຮັດວຽກຢູ່ຕ່າງປະເທດ ແລະ ຜູ້ອອກແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ບັນດາຄຳສັບທີ່ໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄວາມປອດໄພແຮງງານ** ໝາຍເຖິງ ການປາສະຈາກຄວາມອັນຕະລາຍ, ຄວາມສ່ຽງ, ການບາດເຈັບ ແລະ ການສູນເສຍທາງດ້ານຮ່າງກາຍ, ຈິດໃຈ;
2. **ສຸຂະພາບແຮງງານ** ໝາຍເຖິງ ການມີສຸຂະອານາໄມ ໃນການເຮັດວຽກທີ່ດີ, ບໍ່ມີຜົນກະທົບທາງລົບຕໍ່ສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈ ຫຼື ພະຍາດອາຊີບ ຊຶ່ງເນື່ອງມາຈາກການເຮັດວຽກ ຂອງຜູ້ອອກແຮງງານ;
3. **ການບໍລິການກວດສຸຂະພາບແຮງງານ** ໝາຍເຖິງ ການກວດ ແລະ ຢັ້ງຢືນສຸຂະພາບປະຈຳປີ ໃຫ້ແກ່ຜູ້ອອກແຮງງານລາວທີ່ເຮັດວຽກຢູ່ພາຍໃນ ແລະ ຜູ້ອອກແຮງງານຕ່າງປະເທດ ທີ່ເຮັດວຽກຢູ່ ສປປ ລາວ;
4. **ການໃຫ້ຄຳປຶກສາ** ໝາຍເຖິງ ການໃຫ້ຄຳແນະນຳໃນການປ້ອງກັນ ແລະ ແກ້ໄຂບັນຫາ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ສະຖານທີ່ເຮັດວຽກ ລວມທັງ ການສວມໃສ່ເຄື່ອງປ້ອງກັນສ່ວນບຸກຄົນໃນເວລາອອກແຮງງານ, ການນຳໃຊ້ອຸປະກອນ ແລະ ເຄື່ອງຈັກໃຫ້ຖືກຕ້ອງຕາມເຕັກນິກວິຊາການ;
5. **ການຝຶກອົບຮົມ** ໝາຍເຖິງ ການໃຫ້ຄວາມຮູ້ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ໃນສະຖານທີ່ເຮັດວຽກ ເພື່ອໃຫ້ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານມີຄວາມຮູ້ສາມາດປ້ອງກັນໄພອັນຕະລາຍທີ່ອາດຈະເກີດຂຶ້ນຈາກການເຮັດວຽກໄດ້;
6. **ການປະເມີນຄວາມສ່ຽງ** ໝາຍເຖິງ ຂະບວນການຄາດຄະເນ ແລະ ຈັດລະດັບຄວາມເປັນໄປໄດ້ ທີ່ອາດຈະເກີດຄວາມອັນຕະລາຍ ເຊັ່ນ: ການເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ;
7. **ການຄວບຄຸມຄວາມສ່ຽງ** ໝາຍເຖິງ ການນຳໃຊ້ວິທີການຕ່າງໆ, ການປ້ອງກັນບໍ່ໃຫ້ເກີດອຸປະຕິເຫດຈາກການເຮັດວຽກ ເຊັ່ນ: ປ້ອງກັນອັນຕະລາຍຈາກເຄື່ອງຈັກ, ເຄື່ອງມື ແລະ ອຸປະກອນຕ່າງໆ ຫຼື ສະພາບແວດລ້ອມ ຢູ່ໃນສະຖານທີ່ເຮັດວຽກ;
8. **ການກຳຈັດຄວາມສ່ຽງ** ໝາຍເຖິງ ການທຳລາຍ, ການຢຸດຕິ ສິ່ງເສດເຫຼືອ ເຊັ່ນ: ການຈູດ, ເຜົາ, ຝັງດິນ ຫຼື ການກຳຈັດ ລວມທັງການເກັບມ້ຽນທີ່ຖືກຕ້ອງຕາມຫລັກວິຊາການ;
9. **ມາດຕະການປ້ອງກັນຄວາມປອດໄພ ແລະ ສຸຂະພາບແຮງງານ** ໝາຍເຖິງ ການບໍລິຫານ, ການຄຸ້ມຄອງ, ການບໍລິການ ແລະ ການຈັດການໃນການວິເຄາະ, ວິໄຈ, ການບັງຄັບໃຊ້ກົດໝາຍ, ລະບຽບການ ແລະ ປະເມີນສະພາບແວດລ້ອມການເຮັດວຽກ ເພື່ອປ້ອງກັນບໍ່ໃຫ້ເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ;
10. **ການດຳເນີນການວັດແທກດ້ານມາດຕະຖານສະພາບແວດລ້ອມ ໃນສະຖານທີ່ເຮັດວຽກ** ໝາຍເຖິງ ການວັດຄວາມເຂັ້ມຂຸ້ນ ເພື່ອສົມທຽບກັບຄ່າມາດຕະຖານທີ່ໄດ້ກຳນົດໄວ້ ເປັນຕົ້ນ ແມ່ນຄ່າສຽງ, ສີ, ແສງ, ຄວາມຮ້ອນ, ຄວາມເຢັນ, ຝຸ່ນ, ຝຸ່ນລະອອງ, ກິ່ນອາຍ, ຄວັນ ແລະ ອື່ນໆ;
11. **ການວິນິດໄສຄວາມປອດໄພ ແລະ ສຸຂະພາບແຮງງານ** ໝາຍເຖິງ ການດຳເນີນການວິເຄາະຫາສາເຫດການເກີດອຸປະຕິເຫດແຮງງານ ແລະ ການເປັນພະຍາດອາຊີບ ເພື່ອນຳໃຊ້ເຂົ້າໃນການແກ້ໄຂບັນຫາໂດຍອີງໃສ່ກົດໝາຍ ແລະ ລະບຽບການທີ່ມີຢູ່;

12. **ຜູ້ຊ່ຽວຊານສະເພາະດ້ານ** ໝາຍເຖິງ ບຸກຄົນທີ່ມີຄວາມຮູ້ ຄວາມຊຳນານດ້ານໃດໜຶ່ງ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ເປັນຕົ້ນ ນັກວິສະວະກອນ, ພະຍາບານ, ທ່ານໝໍ, ນັກວິໄຈ ແລະ ອື່ນໆ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ**

ລັດ ຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆພາຍໃນປະເທດ ດຳເນີນທຸລະກິດການບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ບົນພື້ນຖານກົດໝາຍ ແລະ ລະບຽບການຂອງປະເທດຊາດ.

**ມາດຕາ 5 ຫຼັກການກ່ຽວກັບໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ**

1. ຮັບປະກັນຜົນປະໂຫຍດລວມຂອງຊາດ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ, ຜູ້ໃຊ້ແຮງງານ ແລະ ໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ຮັບປະກັນການປະຕິບັດພັນທະຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ;
3. ຮັບປະກັນການບໍລິການທີ່ມີຄຸນນະພາບ, ຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ ແລະ ກວດສອບໄດ້.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບການຄຸ້ມຄອງໜ່ວຍງານເຮັດທຸລະກິດບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ໄດ້ຮັບອະນຸຍາດ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

## ໝວດທີ II
## ການຂໍອະນຸຍາດດຳເນີນທຸລະກິດ
## ບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ

**ມາດຕາ 7 ການຂໍອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ພາຍໃນປະເທດ ທີ່ຕ້ອງການຂໍອະນຸຍາດດຳເນີນທຸລະກິດ ບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ຕ້ອງມີເງື່ອນໄຂຄົບຖ້ວນຕາມມາດຕາ 8 ຈຶ່ງສາມາດຍື່ນຄຳຮ້ອງມາຍັງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຂໍ ການພິຈາລະນາ ອະນຸມັດ.

**ມາດຕາ 8 ເງື່ອນໄຂ ການຂໍອະນຸຍາດ**

ການຂໍອະນຸຍາດດຳເນີນທຸລະກິດບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີອາຍຸ 18 ປີ ຂຶ້ນໄປ;
2. ມີລະດັບການສຶກສາຈົບມັດທະຍົມຕອນປາຍຂຶ້ນໄປ;
3. ມີສຸຂະພາບແຂງແຮງ ແລະ ສົມບູນ;
4. ມີຊີວະປະຫວັດຈະແຈ້ງ, ບໍ່ເຄີຍຖືກສານຕັດສິນລົງໂທດ ຕັດອິດສະຫຼະພາບໃນສະຖານການກະທຳຜິດໂດຍເຈດຕະນາ ໃນໄລຍະ ຫົກເດືອນຜ່ານມາ;
5. ມີຖານະເປັນນິຕິບຸກຄົນ, ມີສຳນັກງານ ຫຼື ສິ່ງປຸກສ້າງ, ວັດຖຸອຸປະກອນ ແລະ ພາຫະນະຮັບໃຊ້ຢ່າງ

ເໝາະສົມ;

6. ມີນັກວິຊາການລະດັບປະລິນຍາຕີຂຶ້ນໄປ, ຜູ້ຊ່ຽວຊານສະເພາະດ້ານ ແລະ ມີປະສົບການ ດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ແຕ່ສາມປີຂຶ້ນໄປ;
7. ສຳລັບຜູ້ດຳເນີນທຸລະກິດດ້ານສຸຂະພາບແຮງງານແມ່ນມີການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;
8. ມີທຶນຈົດທະບຽນຢ່າງໜ້ອຍ ສອງຕື້ ກີບ;
9. ຕ້ອງຍື່ນເອກະສານຂໍອະນຸຍາດດ້ວຍຕົນເອງ;
10. ໄດ້ຮັບການເຫັນດີຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 9 ການປະກອບເອກະສານຂໍອະນຸຍາດ**

1. ໃບຄຳຮ້ອງ (ສະບັບຕົ້ນ);
2. ໃບຢັ້ງຢືນທີ່ຢູ່ (ສະບັບຕົ້ນ);
3. ໃບອະນຸຍາດລົງທຶນ ແລະ ທະບຽນວິສາຫະກິດ ໃນກໍລະນີເປັນນິຕິບຸກຄົນ;
4. ໃບແຈ້ງໂທດເບີ 3 ພາຍໃນ 6 ເດືອນ (ສະບັບຕົ້ນ);
5. ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ;
6. ຮູບຂະໜາດ 4 x 6 ຈຳນວນ 4 ໃບ (ຖ່າຍບໍ່ເກີນ 6 ເດືອນ);
7. ບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບ ການບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ;
8. ໃບຊີວະປະຫວັດຂອງຜູ້ອຳນວຍການ, ພະນັກງານວິຊາການ ແລະ ຜູ້ຊ່ຽວຊານສະເພາະດ້ານ;
9. ໃບປະກາດສະນີຍະບັດວິຊາສະເພາະທີ່ກ່ຽວຂ້ອງກັບ ຄວາມປອດໄພ ແລະ ສຸຂະພາບແຮງງານ;
10. ກົດລະບຽບພາຍໃນ ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ແຮງງານ.

**ມາດຕາ 10 ການຂໍຕໍ່ໃບອະນຸຍາດ**

1. ໜັງສືສະເໜີຂໍຕໍ່ໃບອະນຸຍາດ;
2. ບົດສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ;
3. ໃບຢັ້ງຢືນການມອບອາກອນໃຫ້ລັດ;
4. ໃບຢັ້ງຢືນເຂົ້າລະບົບປະກັນສັງຄົມຕາມກົດໝາຍວ່າດ້ວຍປະກັນສັງຄົມ ຂອງພະນັກງານທີ່ຢູ່ໃນການຄຸ້ມຄອງ;
5. ການປະຕິບັດພັນທະອື່ນຕໍ່ລັດ ແລະ ສັງຄົມ ບົນພື້ນຖານກົດໝາຍ ແລະ ລະບຽບການ.

## ໝວດທີ III

## ການອະນຸຍາດ, ການໂຈະ ແລະ ການຍຸບເລີກ

**ມາດຕາ 11 ການພິຈາລະນາອອກໃບອະນຸຍາດ**

1. ມີເອກະສານຄົບຖ້ວນ ຕາມມາດຕາ 9;
2. ສິບຫ້າ ວັນ ລັດຖະການ, ສຳລັບການພິຈາລະນາອະນຸຍາດດຳເນີນທຸລະກິດດ້ານຄວາມປອດໄພແຮງງານ;

3. ສາມສິບ ວັນ ລັດຖະການ, ສໍາລັບການພິຈາລະນາອະນຸຍາດດໍາເນີນທຸລະກິດດ້ານສຸຂະພາບແຮງງານ ຫຼັງຈາກໄດ້ຮັບການເຫັນດີຈາກກະຊວງສາທາລະນະສຸກ.

**ມາດຕາ 12 ອາຍຸການຂອງໃບອະນຸຍາດ**

ໃບອະນຸຍາດ ດໍາເນີນທຸລະກິດບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ມີກໍານົດເວລາ ສາມ ປີ ແລະ ສາມາດຂໍຕໍ່ໄດ້ຄັ້ງໜຶ່ງ ບໍ່ເກີນ ສາມ ປີ.

**ມາດຕາ 13 ການປະເມີນ ແລະ ອະນຸມັດຕໍ່ໃບອະນຸຍາດ**

ໜ່ວຍງານດໍາເນີນທຸລະກິດບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ຈະສະເໜີຕໍ່ໃບອະນຸຍາດ ຕ້ອງໄດ້ຜ່ານການປະເມີນ ຈາກອົງການຄຸ້ມຄອງແຮງງານ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
2. ໃຫ້ການບໍລິການວຽກງານ ຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ໄດ້ຮັບອະນຸຍາດຢ່າງມີປະສິດທິພາບ;
3. ມີລະບົບເກັບກໍາຂໍ້ມູນທີ່ໄດ້ມາດຕະຖານ ແລະ ສາມາດກວດສອບໄດ້;
4. ເຂົ້າເປັນສະມາຊິກປະກັນສັງຄົມຖືກຕ້ອງຕາມກົດໝາຍວ່າດ້ວຍປະກັນສັງຄົມ;
5. ປະຕິບັດພັນທະໃຫ້ແກ່ລັດຢ່າງຖືກຕ້ອງ ແລະ ຄົບຖ້ວນ;
6. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໄລຍະ ສາມ ປີ ຜ່ານມາ.

**ມາດຕາ 14 ການໂຈະ**

ໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂໍໂຈະຂອງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ລະເມີດກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

ກໍານົດເວລາການໂຈະແຕ່ລະຄັ້ງ ແມ່ນບໍ່ເກີນ ໜຶ່ງຮ້ອຍຊາວ ວັນ ຕາມການພິຈາລະນາຂອງອົງການຄຸ້ມຄອງແຮງງານ.

**ມາດຕາ 15 ການຍຸບເລີກ**

ໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ຈະຖືກຍຸບເລີກໃນກໍລະນີ ດັ່ງນີ້:

1. ການດໍາເນີນທຸລະກິດລົ້ມລະລາຍ;
2. ມີການລະເມີດຂໍ້ຫ້າມ ຕາມມາດຕາ ທີ 21 ຂອງຂໍ້ຕົກລົງສະບັບນີ້;
3. ມີຄໍາສັ່ງໃຫ້ຍຸບເລີກຈາກລັດຖະບານ ຫຼື ອົງການທີ່ອອກອະນຸຍາດໃຫ້ດໍາເນີນບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ;
4. ບໍ່ເຄື່ອນໄຫວຕາມພາລະບົດບາດທີ່ໄດ້ຮັບອະນຸຍາດ ໂດຍຖືກສຶກສາອົບຮົມ ແລະ ຕັກເຕືອນຈາກອົງການຄຸ້ມຄອງແຮງງານ ຢ່າງເປັນລາຍລັກອັກສອນແລ້ວ ສອງ ຄັ້ງ;
5. ບໍ່ເຄື່ອນໄຫວກິດຈະການ ເປັນເວລາ ໜຶ່ງ ປີ.

## ໝວດທີ IV
## ສິດ ແລະ ໜ້າທີ່ ຂອງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ

**ມາດຕາ 16 ສິດ ຂອງໜ່ວຍງານ**

ໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ມີສິດ ດັ່ງນີ້:

1. ເຄື່ອນໄຫວດຳເນີນທຸລະກິດດ້ານການບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ຕາມການອະນຸຍາດ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ເກັບກຳຂໍ້ມູນຄວາມຕ້ອງການດ້ານການບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ຫົວໜ່ວຍແຮງງານ;
3. ຈັດກອງປະຊຸມ ແລກປ່ຽນບົດຮຽນ ແລະ ປະສົບການ ຮ່ວມກັບອົງການຂອງລັດ, ໜ່ວຍງານ ແລະ ຂະແໜງການທີ່ກ່ຽວຂ້ອງ;
4. ເກັບຄ່າບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ນຳຫົວໜ່ວຍແຮງງານ ບົນພື້ນຖານການເຫັນດີຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
5. ເຂົ້າຮ່ວມງານສະເຫຼີມສະຫຼອງ ແລະ ວາງສະແດງ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານທີ່ອົງການຈັດຕັ້ງຂອງລັດ, ເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມຈັດຂຶ້ນ ຫຼື ເປັນເຈົ້າການໃນຈັດງານດັ່ງກ່າວກໍໄດ້.

**ມາດຕາ 17 ໜ້າທີ່ ຂອງໜ່ວຍງານ**

ໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການຂອງລັດຖະບານທີ່ກ່ຽວຂ້ອງກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ຕ້ອງມີສັນຍາຮ່ວມມືດ້ານວິຊາການກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
3. ສ້າງ ແລະ ພັດທະນາລະບົບຖານຂໍ້ມູນວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ທັນສະໄໝໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
4. ລົງເກັບກຳ ແລະ ສັງລວມຂໍ້ມູນຄວາມຕ້ອງການດ້ານການບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານຂອງຫົວໜ່ວຍແຮງງານ;
5. ມີສ່ວນຮ່ວມໃນການໂຄສະນາ ແລະ ເຜີຍແຜ່ຂໍ້ມູນຂ່າວສານໃນການສົ່ງເສີມວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ເພື່ອໃຫ້ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ຮັບຮູ້ ແລະ ເຫັນໄດ້ຄວາມສຳຄັນຂອງວຽກງານດັ່ງກ່າວ;
6. ສ້າງຫຼັກສູດ, ຄູ່ມື ແລະ ເຄື່ອງມືສຳລັບຝຶກອົບຮົມວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໂດຍຜ່ານການອະນຸມັດຈາກ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
7. ຈັດຝຶກອົບຮົມ, ໃຫ້ຄຳປຶກສາ ແລະ ແນະນຳ ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ກ່ຽວກັບການປ້ອງກັນ ແລະ ຄວບຄຸມຄວາມປອດໄພ ແລະ ສຸຂະພາບແຮງງານ;

8. ປະເມີນຄວາມສ່ຽງທີ່ເປັນອັນຕະລາຍ ເພື່ອເປັນບ່ອນອີງໃນການປັບປຸງສະພາບແວດລ້ອມໃນການເຮັດວຽກ ຢູ່ພາຍໃນຫົວໜ່ວຍແຮງງານ;
9. ວັດແທກດ້ານມາດຕະຖານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນສະຖານທີ່ເຮັດວຽກ ເປັນຕົ້ນ ສຽງ, ສີ, ແສງ, ຄວາມຮ້ອນ, ຄວາມເຢັນ, ຝຸ່ນ, ຝຸ່ນລະອອງ, ກິ່ນອາຍ ແລະ ຄວັນ;
10. ບໍລິການກວດສຸຂະພາບ ໃຫ້ແກ່ຜູ້ອອກແຮງງານລາວຢູ່ພາຍໃນ, ຜູ້ອອກແຮງງານລາວທີ່ຈະອອກໄປເຮັດວຽກຢູ່ ຕ່າງປະເທດ ແລະ ຜູ້ອອກແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກ ຢູ່ ສປປ ລາວ;
11. ສ້າງລະບົບເກັບກຳຂໍ້ມູນດ້ານວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ທັນສະໄໝ ເພື່ອລາຍງານໃຫ້ ກະຊວງແຮງງານ ແລະ ສະຫວັດດີການ;
12. ເຂົ້າຮ່ວມກອງປະຊຸມຕາມການເຊີນຂອງຂະແໜງການທີ່ກ່ຽວຂ້ອງຂອງລັດ;
13. ສະຫຼຸບລາຍງານ ປະຈຳເດືອນ, ປະຈຳໄຕມາດ, ຫົກເດືອນ ແລະ ປະຈຳປີ ໃຫ້ແກ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

## ໝວດທີ V
## ການຄຸ້ມຄອງ

### ມາດຕາ 18 ການຄຸ້ມຄອງຫຼັກສູດ ແລະ ຄູ່ມືຝຶກອົບຮົມ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຄຸ້ມຄອງຫຼັກສູດ, ຄູ່ມື ແລະ ອຸປະກອນການຝຶກອົບຮົມວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ.

### ມາດຕາ 19 ການຄຸ້ມຄອງການກວດສຸຂະພາບແຮງງານ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງສາທາລະນະສຸກ ເປັນຜູ້ຄົ້ນຄວ້າ ແລະ ກຳນົດຮູບການ, ວິທີການ ແລະ ລາຍການກວດສຸຂະພາບປະຈຳປີໃຫ້ຜູ້ອອກແຮງງານໃນແຕ່ລະໄລຍະ.

### ມາດຕາ 20 ການຄຸ້ມຄອງການອອກໃບຢັ້ງຢືນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ເຊັນໃບຢັ້ງຢືນຝຶກອົບຮົມໃຫ້ແກ່ພະນັກງານ ແລະ ໜ່ວຍງານ ຫຼື ຄະນະກຳມະການ ຮັບຜິດຊອບດ້ານຄວາມປອດໄພ ແລະ ສຸຂະພາບແຮງງານໃນສະຖານທີ່ເຮັດວຽກ.

### ມາດຕາ 21 ຂໍ້ຫ້າມ

ຫ້າມໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ມີພຶດຕິກຳ ດັ່ງນີ້:

1. ໃຫ້ນິຕິບຸກຄົນຢືມ ຫຼື ເຊົ່າໃບອະນຸຍາດດຳເນີນທຸລະກິດບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານຂອງຕົນ;
2. ອອກໃບຢັ້ງຢືນການຝຶກອົບຮົມໃຫ້ແກ່ພະນັກງານ ແລະ ໜ່ວຍງານ ຫຼື ຄະນະກຳມະການ ຮັບຜິດຊອບດ້ານຄວາມປອດໄພ ແລະ ສຸຂະພາບແຮງງານໃນສະຖານທີ່ເຮັດວຽກ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ;

3. ເຄື່ອນໄຫວ ບໍ່ເປັນໄປຕາມ ພາລະບົດບາດທີ່ໄດ້ຮັບອະນຸຍາດໃຫ້ບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ;
4. ທັບຖົມ, ໂຈມຕີ ແລະ ໃສ່ຮ້າຍປ້າຍສີ ສິ່ງທີ່ບໍ່ດີຕໍ່ ໜ່ວຍງານການບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານອື່ນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ VI
## ການເກັບຄ່າທຳນຽມ ແລະ ຄ່າບໍລິການ

### ມາດຕາ 22 ການເກັບຄ່າທຳນຽມ

ການເກັບຄ່າທຳນຽມ ໃຫ້ປະຕິບັດຕາມ ລັດຖະບັນຍັດ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 (ມາດຕາ 41 ແລະ 42).

1. ຄ່າທຳນຽມອອກໃບອະນຸຍາດດຳເນີນບໍລິການຄວາມປອດໄພແຮງງານໜຶ່ງລ້ານກີບ ສາມປີ ຕໍ່ຄັ້ງ;
2. ຄ່າທຳນຽມອອກໃບອະນຸຍາດ ດຳເນີນບໍລິການການກວດສຸຂະພາບແຮງງານ ໜຶ່ງລ້ານກີບ ສາມປີ ຕໍ່ຄັ້ງ;
3. ການຕໍ່ໃບອະນຸຍາດດຳເນີນບໍລິການຄວາມປອດໄພແຮງງານ ຫ້າແສນກີບ ສາມປີ ຕໍ່ຄັ້ງ;
4. ການຕໍ່ໃບອະນຸຍາດດຳເນີນບໍລິການກວດສຸຂະພາບແຮງງານ ຫ້າແສນກີບ ສາມປີ ຕໍ່ຄັ້ງ.

### ມາດຕາ 23 ການເກັບຄ່າບໍລິການ

ການເກັບຄ່າບໍລິການ ແມ່ນປະຕິບັດ ດັ່ງນີ້:

1. ອອກໃບຢັ້ງຢືນການຝຶກອົບຮົມໃຫ້ພະນັກງານ, ໜ່ວຍງານ ຫຼື ຄະນະກຳມະການຮັບຜິດຊອບຄວາມປອດໄພແຮງງານ ໜຶ່ງແສນກີບ/ຄົນ/ຄັ້ງ;
2. ອອກ ແລະ ຕໍ່ໃບອະນຸຍາດດຳເນີນທຸລະກິດ ໜຶ່ງແສນກີບ/ຄັ້ງ;
3. ຂຶ້ນທະບຽນເປັນພະນັກງານຮັບຜິດຊອບຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ໃນສະຖານທີ່ເຮັດວຽກ ຫ້າສິບ ພັນກີບ/ຄົນ;
4. ການຮັບຮອງເປັນໜ່ວຍງານ ຫຼື ຄະນະກຳມະການຮັບຜິດຊອບຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ໃນສະຖານທີ່ເຮັດວຽກ ໜຶ່ງແສນກີບ/ຄັ້ງ
5. ຄ່າບໍລິການກວດສຸຂະພາບປະຈຳປີໃຫ້ຜູ້ອອກແຮງງານ ແມ່ນຕ້ອງໄດ້ອີງໃສ່ການກຳນົດເກັບຄ່າບໍລິການຂອງແຕ່ລະສູນກວດສຸຂະພາບແຮງງານ ແລະ ຂຶ້ນກັບຈຳນວນລາຍການກວດສຸຂະພາບຜູ້ອອກແຮງງານ ບົນພື້ນຖານການເຫັນດີຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງສາທາລະນະສຸກ.

## ໝວດທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 24 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 25 ມາດຕະການຕໍ່ຜູ້ລະເມີດ**

ມາດຕະການຕໍ່ຜູ້ລະເມີດ ຂໍ້ຕົກລົງສະບັບນີ້ ມີດັ່ງນີ້:

ບຸກຄົນ, ນິຕິບຸກຄົນ ຫຼື ໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 26 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງແຮງງານ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຜັນຂະຫຍາຍ, ໂຄສະນາເຜີຍແຜ່ ໃຫ້ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ສັງຄົມ ຮັບຮູ້, ເຂົ້າໃຈ ແລະ ຊີ້ນຳໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 27 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ່ລົງລາຍເຊັນ ແລະ ວັນທີລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ລັດຖະມົນຕີ

ໃບຄຳ ຂັດທິຍະ